# ກ່ຽວກັບຜູ້ຂຽນ

ປີເຕີ ເອງ (Peter Eng) ເປັນນັກໜັງສືພິມອິດສະຫລະແລະເປັນສະມາຊິກອາສາສະໝັກຂອງຄະນະກຳມະການບໍລິຫານຂອງມູນນິທິອະນຸສອນສື່ອິນດູຈີນ ຕັ້ງແຕ່ປີ 1989 ຫາ 1996. ເຂົາເປັນບັນນາທິການຂ່າວແອສໂຊຊີເອເຕັດເພຣສ໌ (Associated Press) ຢູ່ກຸງເທບ, ກຳກັບການລາຍງານຂ່າວປະຈຳວັນກ່ຽວກັບປະເທດກຳປູເຈຍ, ລາວ, ມຽນມາ, ໄທແລະຫວຽດນາມ ມາຕັ້ງແຕ່ປີ 1996. ເຂົາເປັນນັກໜັງສືພິມອິດສະຫລະ, ຂຽນຂ່າວການປ່ຽນແປງທາງດ້ານການເມືອງແລະສັງຄົມຢູ່ອາຊີຕາເວັນອອກສ່ຽງໃຕ້ໃຫ້ໜັງສືພິມຫລາຍສະບັບ, ວາລະສານແລະປຶ້ມຕ່າງໆທີ່ພິມຢູ່ໃນສະຫະລັດອາເມຣິກາແລະອາຊີ. ເຂົາສອນວິຊາໜັງສືພິມຢູ່ມະຫາວິທະຍາໄລຮົ່ງກົງ (University of Hong Kong) ແລະອິນເຕີນິວສ໌ (Internews) ຊຶ່ງເປັນກຸ່ມທີ່ບໍ່ຫາກຳໄລຢູ່ໃນສະຫະລັດອາເມຣິກາແລະອົງການອື່ນໆ. ເຂົາໄດ້ຮັບປຣິນຍາໂທສາຂາລັດຖະສາດຈາກມະຫາວິທະຍາໄລຊິກາໂກ (University of Chicago) ແລະເປັນຜູ້ໄດ້ຮັບທຶນນີມັນ ເຟລໂລ (Nieman Fellow) ຢູ່ມະຫາວິທະຍາໄລຮາວາດ (Harvard University).

ເຈຟ ຮອດສັນ (Jeff Hodson) ແມ່ນອະດີດຮອງຫົວໜ້າບັນນາທິການຂອງໜັງສືພິມ *ເດີະ ແຄມໂບເດຍ ເດລີ (The Cambodia Daily)* ມີປະສົບການດ້ານວຽກໜັງສືພິມຫລາຍກວ່າ 12 ປີ ຢູ່ໃນອາຊີແລະສະຫະລັດອາເມຣິກາ. ໃນປີ 2000 ຮອດສັນໄດ້ຮັບທຶນໄນທ໌ ອິນເຕີເນຊັນແນລເພຣສ໌ ໂດຍໄດ້ຮັບມອບໝາຍໃຫ້ມາເປັນຄູຝຶກຂອງມູນນິທິອະນຸສອນສື່ອິນດູຈີນ. ເຂົາໄດ້ຈັດກອງປະຊຸມອົບຮົມແລະຈັດຊຸດອົບຮົມວິຊາການຂ່າວຢູ່ປະເທດໄທແລະລາວ, ທັງໄດ້ສອນທີ່ມະຫາວິທະຍາໄລຣໍຢັລທີ່ພະນົມເປັນ (the Royal University of Phnom Penh) ຢູ່ກຳປູເຈຍ. ຮອດສັນໄດ້ຮັບປຣິນຍາໂທສາຂາໜັງສືພິມຈາກມະຫາວິທະຍາໄລນໍເວສ໌ເທີນ (Northwestern University) ຢູ່ສະຫະລັດອາເມຣິກາແລະປຣິນຍາຕຣີສາຂາປະຫວັດສາດຈາກວິທະຍາໄລວິທແມນ (Whitman College) ລັດວໍຊິງຕັນ, ສະຫະລັດອາເມຣິກາ.

# ກ່ຽວກັບຜູ້ແປ

## ບຸນທັນ ພົງພິຈິດ

ບຸນທັນ ພົງພິຈິດຈົບການສຶກສາວິຊາການຂ່າວ *(Master of Arts in Journalism)* ຈາກມະຫາວິທະຍາໄລວາໂຣເນສ໌ ຂອງອະດີດສະຫະພາບໂຊວຽດໃນ ປີ 1981 ແລະ ໄດ້ຜ່ານການຝຶກອົບຮົມວິຊາໜັງສືພິມ, ດ້ານການຜະລິດລາຍການວິທະຍຸແລະ ໂທລະພາບຢູ່ປະເທດເຢຍລະມັນ, ຮົງກົງ, ມາເລເຊຍແລະຟີລິບປິນ.

ຜູ້ກ່ຽວໄດ້ເຮັດວຽກຢູ່ສະຖານີໂທລະພາບແຫ່ງຊາດຂອງລາວເປັນເວລາ 10 ປີ ຕໍ່ມາໄດ້ອອກມາເຮັດວຽກຊ່ວຍອົງການທີ່ບໍ່ຂຶ້ນກັບລັດຖະບານ ກ່ຽວກັບການຜະລິດສື່ເພື່ອການພັດທະນາ. ປັດຈຸບັນເຮັດວຽກເປັນທີ່ປຶກສາແລະນັກແປອິດສະຫລະ, ຊ່ວຍຈັດຝຶກອົບຮົມການຜະລິດສື່ເພື່ອການພັດທະນາ, ສົ່ງເສີມການອ່ານແລະການຂຽນໃນລັກສະນະສ້າງສັນ.

# ຄໍາເຫັນຂອງຜູ້ແປ

ຂ້າພະເຈົ້າມີຄວາມຍິນດີເປັນຢ່າງຍິ່ງທີ່ໄດ້ປະກອບສ່ວນໃນການແປປຶ້ມຄູ່ມືພື້ນຖານການຂຽນຂ່າວແລະລາຍງານຂ່າວຫົວນີ້ ເພາະວ່າຜ່ານມາມີການຝຶກອົບຮົມວິຊາດ້ານນີ້ຫລາຍຄັ້ງໃນລະດັບພາຍໃນແລະຕ່າງປະເທດ ແຕ່ບໍ່ເຄີຍມີປຶ້ມຄູ່ມືແນະນໍາເປັນພາສາລາວອອກມາຈັກເທື່ອ.

ຂ້າພະເຈົ້າໄດ້ໃຊ້ຄວາມພະຍາຍາມສຸດຄວາມສາມາດເພື່ອແປປຶ້ມຫົວນີ້ແຕ່ກໍ່ຍັງມີບາງບັນຫາໂດຍສະເພາະແມ່ນການໃຊ້ສັບຕ່າງໆ ຊຶ່ງພວກເຮົາຍັງບໍ່ທັນໃຊ້ເປັນເອກະພາບກັນເທື່ອ. ເຖິງຢ່າງໃດກໍ່ດີ ຂ້າພະເຈົ້າຄິດວ່າ ປຶ້ມຄູ່ມືຫົວນີ້ຄົງຈະເປັນຜົນປະໂຫຍດຫລາຍທີ່ສຸດສໍາລັບນັກຂ່າວຜູ້ທີ່ຕ້ອງການພັດທະນາອາຊີບຂອງຕົນໃຫ້ຈະເລີນກ້າວໜ້າຂຶ້ນໄປ.

ຂ້າພະເຈົ້າຂອບໃຈນໍາທ່ານອະນຸລັກຄໍາມາລາວົງ ຫົວໜ້າບັນນາທິການແລະຜູ້ອໍານວຍການວາລະສານອັບເດດທ໌ ທີ່ສະຫລະເວລາກວດແກ້ປຶ້ມຄູ່ມືຫົວນີ້ຈົນເປັນສະບັບສົມບູນ.